ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----=====000=====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 002/ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 24 JUL 2013

# ລະບຽບ
# ວ່າດ້ວຍ ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກລະບຽບ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ ກຳນົດຫຼັກການ, ລະບຽບການເພີ່ມເຕີມ ກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ ເພື່ອອຳນວຍຄວາມສະດວກໃຫ້ແກ່ການສ້າງຕັ້ງ ແລະ ການເຄື່ອນໄຫວວຽກງານຂອງບໍລິສັດຫຼັກຊັບ ແນໃສ່ສົ່ງເສີມໃຫ້ຫົວໜ່ວຍດັ່ງກ່າວ ເຄື່ອນໄຫວຢ່າງມີປະສິດທິພາບ, ໝັ້ນຄົງ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 ຂອບເຂດການນຳໃຊ້**

ລະບຽບສະບັບນີ້ ນຳໃຊ້ສຳລັບ ບໍລິສັດຫຼັກຊັບ ລວມທັງສະມາຊິກສະພາບໍລິຫານ, ຄະນະອຳນວຍການ, ຄະນະສາຂາ, ຄະນະພະແນກ, ຄະນະໜ່ວຍບໍລິການ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ພະນັກງານ ຂອງຫົວໜ່ວຍດັ່ງກ່າວ ທີ່ເຄື່ອນໄຫວທຸລະກິດຫຼັກຊັບ ຢູ່ ສປປ ລາວ.

## ໝວດທີ 2
## ການສ້າງຕັ້ງບໍລິສັດຫຼັກຊັບ

### ມາດຕາ 3 ເງື່ອນໄຂການສ້າງຕັ້ງບໍລິສັດຫຼັກຊັບ

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງຂໍສ້າງຕັ້ງບໍລິສັດຫຼັກຊັບ ປະເພດນາຍໜ້າຊື້-ຂາຍຫຼັກຊັບ ແລະ ຄໍ້າປະກັນການອອກຈໍາໜ່າຍຫຼັກຊັບ ຕ້ອງມີເງື່ອນໄຂຄົບຖ້ວນ ແລະ ປະກອບເອກະສານການຂໍສ້າງຕັ້ງ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍ ຫຼັກຊັບ ມາດຕາ 51 ແລະ 52 ນອກຈາກນັ້ນ ຕ້ອງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ມີຄູ່ຮ່ວມທຶນທີ່ເປັນທະນາຄານທຸລະກິດ ທີ່ຖືກສ້າງຕັ້ງຂຶ້ນຕາມກົດໝາຍຂອງ ສປປ ລາວ ຢ່າງໜ້ອຍໜຶ່ງຜູ້ຖືຮຸ້ນ ແລະ ຕ້ອງຖືຮຸ້ນລວມກັນ ສາມສິບສ່ວນຮ້ອຍຂຶ້ນໄປ;
2. ມີຊື່ສຽງ ແລະ ປະສົບການ ໃນການດໍາເນີນທຸລະກິດຫຼັກຊັບ, ການເງິນ-ການທະນາຄານ ຫຼື ການບັນຊີ ທັງພາຍໃນ ແລະ ຕ່າງປະເທດ ຢ່າງຕໍ່າ 5 ປີ;
3. ມີສັນຍາຮ່ວມກັບທະນາຄານດູແລຊັບສິນ (ທະນາຄານຕົວແທນໃນການຊໍາລະ) ຢ່າງໜ້ອຍໜຶ່ງທະນາຄານ ເພື່ອເຮັດໜ້າທີ່ໃນການຊໍາລະ;
4. ບໍ່ເຄີຍລະເມີດລະບຽບກົດໝາຍ ທີ່ມີລັກສະນະຮ້າຍແຮງ ໃນຂົງເຂດຫຼັກຊັບ, ການເງິນ-ການທະນາຄານ ຫຼື ການບັນຊີ;
5. ຜູ້ຂໍອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ ຈາກຕ່າງປະເທດ ຕ້ອງແມ່ນບໍລິສັດຫຼັກຊັບເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດຈາກ ຄລຕ ປະເທດຕົນ.

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງຂໍສ້າງຕັ້ງບໍລິສັດຫຼັກຊັບ ປະເພດທີ່ປຶກສາດ້ານການເງິນ ຕ້ອງມີເງື່ອນໄຂຄົບຖ້ວນ ແລະ ປະກອບເອກະສານການຂໍສ້າງຕັ້ງ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍ ຫຼັກຊັບ ມາດຕາ 51 ແລະ 52. ນອກຈາກນັ້ນ ຕ້ອງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ມີຄູ່ຮ່ວມທຶນທີ່ເປັນ ບຸກຄົນ ຫຼື ນິຕິບຸກຄົນພາຍໃນ ທີ່ຖືກສ້າງຕັ້ງຂຶ້ນຕາມກົດໝາຍຂອງ ສປປ ລາວ ແລະ ຖືຮຸ້ນລວມກັນແຕ່ ສິບສ່ວນຮ້ອຍຂຶ້ນໄປ;
2. ມີຊື່ສຽງ ແລະ ປະສົບການ ໃນການດໍາເນີນທຸລະກິດຫຼັກຊັບ, ການເງິນ-ການທະນາຄານ ຫຼື ການບັນຊີ ທັງພາຍໃນ ແລະ ຕ່າງປະເທດ ຢ່າງຕໍ່າ 5 ປີ;
3. ບໍ່ເຄີຍລະເມີດລະບຽບກົດໝາຍ ທີ່ມີລັກສະນະຮ້າຍແຮງ ໃນຂົງເຂດ ຫຼັກຊັບ, ການເງິນ-ການທະນາຄານ ຫຼື ການບັນຊີ;
4. ຜູ້ຂໍອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ ຈາກຕ່າງປະເທດ ຕ້ອງແມ່ນບໍລິສັດຫຼັກຊັບເທົ່ານັ້ນ ແລະ ຕ້ອງໄດ້ຮັບອະນຸຍາດຈາກ ຄລຕ ປະເທດຕົນ.

### ມາດຕາ 4 ທຶນຈົດທະບຽນ

ຜູ້ທີ່ມີຈຸດປະສົງຂໍສ້າງຕັ້ງບໍລິສັດຫຼັກຊັບ ຕ້ອງມີທຶນຈົດທະບຽນ ຕາມປະເພດທຸລະກິດຫຼັກຊັບ ດັ່ງນີ້:

1. ທີ່ປຶກສາດ້ານການເງິນ 5 ຕື້ກີບ;

2. ນາຍໜ້າຊື້-ຂາຍຫຼັກຊັບ 30 ຕື້ກີບ;
3. ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ 100 ຕື້ກີບ.

### ມາດຕາ 5 ໃບອະນຸຍາດສ້າງຕັ້ງຊົ່ວຄາວ

ຜູ້ຂໍອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ ຈະໄດ້ຮັບໃບອະນຸຍາດສ້າງຕັ້ງຊົ່ວຄາວ ຖ້າມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍ ຫຼັກຊັບ ມາດຕາ 51 ແລະ 52 ໃບອະນຸຍາດສ້າງຕັ້ງຊົ່ວຄາວ ເປັນພຽງໃບຢັ້ງຢືນດ້ານຫຼັກການກ່ຽວກັບການອະນຸຍາດສ້າງຕັ້ງ. ຜູ້ທີ່ໄດ້ຮັບອະນຸຍາດສ້າງຕັ້ງຊົ່ວຄາວ ບໍ່ສາມາດເຄື່ອນໄຫວທຸລະກິດໄດ້ ແຕ່ສາມາດນຳໃຊ້ໃບອະນຸຍາດດັ່ງກ່າວ ເພື່ອປະກອບເປັນຫຼັກຖານອ້າງອີງ ປະຕິບັດເງື່ອນໄຂເພີ່ມເຕີມຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍ ຫຼັກຊັບ ມາດຕາ 53.

### ມາດຕາ 6 ການຖອກ ແລະ ການນຳໃຊ້ທຶນຈົດທະບຽນ

ພາຍຫຼັງຜູ້ຂໍສ້າງຕັ້ງບໍລິສັດຫຼັກຊັບ ໄດ້ຮັບໃບອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບຊົ່ວຄາວແລ້ວ ຕ້ອງຖອກທຶນຈົດທະບຽນໃຫ້ຄົບຖ້ວນ ເຂົ້າບັນຊີເງິນຝາກຂອງຕົນຢູ່ ທະນາຄານແຫ່ງ ສປປ ລາວ ນັບແຕ່ວັນທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຊົ່ວຄາວເປັນຕົ້ນໄປ.

ຜູ້ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ທີ່ຕ້ອງການນຳໃຊ້ທຶນຈົດທະບຽນ ເພື່ອກະກຽມ ຄວາມພ້ອມໃນການເຄື່ອນໄຫວທຸລະກິດຫຼັກຊັບ ຫຼື ເປົ້າໝາຍອື່ນ ຕ້ອງມີແຜນການນຳໃຊ້ທຶນຢ່າງລະອຽດ ແລະ ຕ້ອງໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເສຍກ່ອນ ຈຶ່ງສາມາດນຳໃຊ້ໄດ້.

### ມາດຕາ 7 ການຂຶ້ນທະບຽນວິສາຫະກິດ

ພາຍຫຼັງຜູ້ຂໍສ້າງຕັ້ງບໍລິສັດຫຼັກຊັບ ໄດ້ຮັບໃບອະນຸຍາດສ້າງຕັ້ງຖາວອນແລ້ວ ຕ້ອງໄປແຈ້ງຂຶ້ນທະບຽນວິສາຫະກິດ ພາຍໃນກຳນົດສາມສິບວັນ (30 ວັນ) ນັບແຕ່ວັນທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຖາວອນເປັນຕົ້ນໄປ ແລະ ສາມາດດຳເນີນທຸລະກິດ ຕາມທີ່ໄດ້ກຳນົດໃນກົດໝາຍທີ່ກ່ຽວຂ້ອງ. ໃນກໍລະນີ ຜູ້ຂໍສ້າງຕັ້ງ ຫາກບໍ່ໄປແຈ້ງຂຶ້ນທະບຽນວິສາຫະກິດພາຍໃນກຳນົດເວລາດັ່ງກ່າວ, ໃບອະນຸຍາດສ້າງຕັ້ງຖາວອນນັ້ນ ກໍຈະຕົກໄປ.

### ມາດຕາ 8 ການສ້າງຕັ້ງສາຂາ ແລະ ໜ່ວຍບໍລິການ

ບໍລິສັດຫຼັກຊັບ ທີ່ໄດ້ຮັບອະນຸຍາດຖາວອນແລ້ວ ສາມາດສ້າງຕັ້ງສາຂາ ແລະ ໜ່ວຍບໍລິການໄດ້ ຊຶ່ງການສ້າງຕັ້ງແຕ່ລະຄັ້ງ ຕ້ອງໄດ້ສະເໜີຂໍອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເສຍກ່ອນ.

### ມາດຕາ 9 ເງື່ອນໄຂໃນການສ້າງຕັ້ງສາຂາ ແລະ ໜ່ວຍບໍລິການ

ບໍລິສັດຫຼັກຊັບ ທີ່ມີຈຸດປະສົງສ້າງຕັ້ງສາຂາ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ດຳເນີນທຸລະກິດຫຼັກຊັບ ຢ່າງຕ່ຳໜຶ່ງປີ, ມີຜົນກຳໄລ ແລະ ມີທຶນພຽງພໍກັບຄ່າໃຊ້ຈ່າຍໃນການສ້າງຕັ້ງສາຂາ;
2. ກົງຈັກການຈັດຕັ້ງ, ກົງຈັກການຄຸ້ມຄອງບໍລິຫານທຸລະກິດ ແລະ ລະບົບການກວດສອບບັນຊີພາຍໃນ ທີ່ມີປະສິດທິພາບ;
3. ສຳນັກງານ ທີ່ເໝາະສົມ ແລະ ອຸປະກອນຮັບໃຊ້ຄົບຊຸດ;
4. ລະບົບເຕັກໂນໂລຊີ-ຂໍ້ມູນຂ່າວສານ ທີ່ຮັບປະກັນ ແລະ ທັນສະໄໝ ສາມາດເຊື່ອມໂຍງກັບສຳນັກງານໃຫຍ່ ແລະ ພາກສ່ວນທີ່ກ່ຽວຂ້ອງ;
5. ລະບົບຮັບ-ສົ່ງຂໍ້ມູນຂ່າວສານ ສາມາດຕອບສະໜອງໃຫ້ແກ່ວຽກງານຄຸ້ມຄອງໄດ້ເປັນຢ່າງດີ;
6. ປະຕິບັດລະບຽບວ່າດ້ວຍຄວາມໝັ້ນຄົງຂອງບໍລິສັດຫຼັກຊັບ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ;
7. ຄະນະສາຂາ ຕ້ອງມີຄວາມຮູ້ຄວາມສາມາດ ແລະ ປະສົບການດ້ານທຸລະກິດຫຼັກຊັບ, ການເງິນ-ການທະນາຄານ ແລະ ການບັນຊີ ຢ່າງໜ້ອຍຫ້າປີ ແລະ ຕ້ອງມີໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ;
8. ມີພະນັກງານ ໃນຈຳນວນທີ່ເໝາະສົມ ແລະ ຕ້ອງມີໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບທີ່ກ່ຽວຂ້ອງ;
9. ເງື່ອນໄຂອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ສຳລັບການສ້າງຕັ້ງໜ່ວຍບໍລິການ ໃຫ້ປະຕິບັດຕາມ ວັກທີໜຶ່ງ ຂອງມາດຕານີ້ ຍົກເວັ້ນ ຂໍ້ 1, 2, 6 ແລະ 7.

**ມາດຕາ 10 ເອກະສານປະກອບການຂໍສ້າງຕັ້ງສາຂາ ແລະ ໜ່ວຍບໍລິການ**

ການສ້າງຕັ້ງສາຂາ ແລະ ໜ່ວຍບໍລິການ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ລະບຽບວ່າດ້ວຍການຄຸ້ມຄອງສາຂາ ແລະ ໜ່ວຍບໍລິການ ຂອງບໍລິສັດຫຼັກຊັບ;
3. ໃບຢັ້ງຢືນວຸດທິການສຶກສາ, ໃບແຈ້ງໂທດ, ປະຫວັດໃນການດຳເນີນທຸລະກິດ ຂອງຄະນະສາຂາ ແລະ ຄະນະໜ່ວຍບໍລິການ;
4. ເອກະສານລາຍງານການເງິນ ຂອງບໍລິສັດທີ່ໄດ້ຜ່ານການກວດສອບ ຈາກບໍລິສັດກວດສອບ;
5. ແຜນການດຳເນີນທຸລະກິດຂອງສາຂາ 3 ປີທຳອິດ ແລະ ໜ່ວຍບໍລິການ 1 ປີທຳອິດ ພາຍຫຼັງການສ້າງຕັ້ງ;
6. ເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 11 ການສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງບໍລິສັດຫຼັກຊັບຕ່າງປະເທດ**

ບໍລິສັດຫຼັກຊັບຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງຫ້ອງການຜູ້ຕາງໜ້າຢູ່ ສປປ ລາວ ຕ້ອງຍື່ນຄຳຮ້ອງຂໍສ້າງຕັ້ງຕໍ່ກະຊວງແຜນການ ແລະ ການລົງທຶນ. ພາຍຫຼັງໄດ້ຮັບໃບທະບຽນຫ້ອງການຜູ້ຕາງໜ້າຈາກພາກສ່ວນດັ່ງກ່າວ ຕ້ອງແຈ້ງໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບ ເພື່ອ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະອອກໃບຮັບຮອງການເຄື່ອນໄຫວຕາມບົດບາດຂອງຕົນ

ໃນຂົງເຂດວຽກງານຫຼັກຊັບ. ການສ້າງຕັ້ງຫ້ອງການຜູ້ຕາງໜ້າ ສາມາດເຄື່ອນໄຫວຕາມທີ່ໄດ້ກຳນົດໃນ ມາດຕາ 12 ຂອງລະບຽບສະບັບນີ້.

**ມາດຕາ 12 ຂອບເຂດການເຄື່ອນໄຫວຂອງຫ້ອງການຜູ້ຕາງໜ້າຂອງບໍລິສັດຫຼັກຊັບຕ່າງປະເທດ**

ຫ້ອງການຜູ້ຕາງໜ້າຂອງບໍລິສັດຫຼັກຊັບຕ່າງປະເທດ ສາມາດເຄື່ອນໄຫວພາຍໃນຂອບເຂດ ດັ່ງນີ້:

1. ເປັນຫ້ອງການປະສານງານ, ເກັບກຳຂໍ້ມູນ ແລະ ສຶກສາຄວາມເປັນໄປໄດ້ໃນການສ້າງຕັ້ງບໍລິສັດຫຼັກຊັບ ແລະ ປະສານງານດ້ານເອກະສານຕ່າງໆ ເພື່ອສະເໜີຂໍສ້າງຕັ້ງບໍລິສັດຫຼັກຊັບ;
2. ສົ່ງເສີມໂຄງການຮ່ວມມືດ້ານວິຊາການ ເພື່ອພັດທະນາທຸລະກິດດ້ານຫຼັກຊັບ ແລະ ຕະຫຼາດຫຼັກຊັບຢູ່ ສປປ ລາວ;
3. ກິດຈະກຳອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 13 ຄ່າທຳນຽມ**

ຜູ້ທີ່ສະເໜີຂໍສ້າງຕັ້ງບໍລິສັດຫຼັກຊັບ, ສາຂາ ແລະ ໜ່ວຍບໍລິການ ຕ້ອງເສຍຄ່າທຳນຽມໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງຄົບຖ້ວນ.

ລາຍລະອຽດຂອງຄ່າທຳນຽມມີ ດັ່ງນີ້:

1. ການຍື່ນສຳນວນຂໍສ້າງຕັ້ງ:
   - 1.1. ບໍລິສັດຫຼັກຊັບ (ສຳນັກງານໃຫຍ່) ຈຳນວນ 20.000.000 ກີບ;
   - 1.2. ສາຂາ ແລະ ໜ່ວຍບໍລິການ ບໍລິສັດຫຼັກຊັບ ຈຳນວນ 10.000.000 ກີບ.
2. ໃບອະນຸຍາດສ້າງຕັ້ງ ຈຳນວນສູນຈຸດໜຶ່ງສ່ວນຮ້ອຍ (0,1%) ຂອງທຶນຈົດທະບຽນ ແລະ ຕ້ອງຊຳລະເງິນໃນວັນທີ່ໄດ້ຮັບໃບອະນຸຍາດສ້າງຕັ້ງຖາວອນ.
3. ຄ່າຄຸ້ມຄອງປະຈຳປີ ຈຳນວນສູນຈຸດໜຶ່ງສ່ວນຮ້ອຍ (0,1%) ຂອງລາຍຮັບທັງໝົດປະຈຳປີ ແຕ່ບໍ່ໃຫ້ຫຼຸດ 30.000.000 ກີບ ຊຶ່ງຕ້ອງຊຳລະພາຍໃນໄຕມາດທີໜຶ່ງຂອງປີຖັດໄປ ໂດຍຄິດໄລ່ແຕ່ປີສ້າງຕັ້ງເປັນຕົ້ນໄປ.

**ມາດຕາ 14 ລະບຽບການພາຍໃນ ແລະ ກົດລະບຽບຂອງບໍລິສັດຫຼັກຊັບ**

ກົດລະບຽບຂອງບໍລິສັດຫຼັກຊັບ ນອກຈາກມີເນື້ອໃນຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 60 ແລ້ວ ຕ້ອງມີເນື້ອໃນເພີ່ມເຕີມຕາມທີ່ໄດ້ບົ່ງໄວ້ໃນແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ. ສຳລັບລະບຽບການພາຍໃນ ຕ້ອງມີເນື້ອໃນຄົບຖ້ວນ ແລະ ຮັດກຸມ ສາມາດເປັນບ່ອນອີງໃນການເຄື່ອນໄຫວທຸລະກິດ ປະຈຳວັນ ຂອງຕົນໄດ້ເປັນຢ່າງດີ. ລະບຽບການພາຍໃນ ແລະ ກົດລະບຽບຂອງບໍລິສັດຫຼັກຊັບ ຈະມີຜົນສັກສິດໄດ້ກໍ່ຕໍ່ເມື່ອ ໄດ້ຮັບການຮັບຮອງຢ່າງເປັນລາຍລັກອັກສອນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 15 ການປ່ຽນແປງລາຍການຂອງບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ, ສາຂາ ແລະ ໜ່ວຍບໍລິການ ນອກຈາກສາມາດປ່ຽນແປງລາຍການ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍ ຫຼັກຊັບ ມາດຕາ 69 ແລ້ວ, ບໍລິສັດຫຼັກຊັບ ຍັງສາມາດປ່ຽນ ແປງ

ຄະນະສາຂາ, ຄະນະພະແນກ, ຄະນະໜ່ວຍບໍລິການ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ຕາມການອະນຸຍາດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 16 ການແຈ້ງເຕືອນ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະແຈ້ງເຕືອນ ບໍລິສັດຫຼັກຊັບ, ສາຂາ ແລະ ໜ່ວຍບໍລິການ ພ້ອມທັງກຳນົດເວລາໃນການແກ້ໄຂບັນຫາ ໃນກໍລະນີຫາກພົບເຫັນປະກົດການໃດໜຶ່ງ ດັ່ງນີ້:

1. ບໍ່ປະຕິບັດຕາມລະບຽບການກ່ຽວກັບວຽກງານຫຼັກຊັບ;
2. ມີຫຼັກຖານຢັ້ງຢືນວ່າ ບໍລິສັດຫຼັກຊັບ, ສາຂາ ແລະ ໜ່ວຍບໍລິການ ເຄື່ອນໄຫວໃນລັກສະນະທີ່ອາດກໍ່ໃຫ້ເກີດຄວາມເສັຍຫາຍຕໍ່ຜົນປະໂຫຍດຂອງຜູ້ລົງທຶນ;
3. ດຳເນີນການໃດໜຶ່ງທີ່ເປັນການລະເມີດ ກົດໝາຍວ່າດ້ວຍ ຫຼັກຊັບ ມາດຕາ 135 ແລະ 137;
4. ລະເມີດລະບຽບກົດໝາຍອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 17 ການສັ່ງໂຈະການເຄື່ອນໄຫວຊົ່ວຄາວ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດສັ່ງໂຈະການເຄື່ອນໄຫວທຸລະກິດ ຂອງບໍລິສັດຫຼັກຊັບ, ສາຂາ ແລະ ໜ່ວຍບໍລິການ ບາງສ່ວນ ຫຼື ທັງໝົດ ຊົ່ວຄາວ ຫາກບໍລິສັດຫຼັກຊັບ ບໍ່ສາມາດແກ້ໄຂບັນຫາຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ຂອງລະບຽບສະບັບນີ້.

**ມາດຕາ 18 ຄະນະກຳມະການສະສາງ-ຊຳລະ**

ຄະນະກຳມະການເພື່ອດຳເນີນການສະສາງ-ຊຳລະ ຖືກແຕ່ງຕັ້ງໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ ຊຶ່ງປະກອບດ້ວຍບຸກຄົນທີ່ມາຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ ທີ່ມີຄຸນວຸດທິ ແລະ ເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນລະບຽບຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ສຳລັບ ສິດ ແລະ ໜ້າທີ່ ຂອງຄະນະກຳມະການເພື່ອດຳເນີນການສະສາງ-ຊຳລະ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

**ມາດຕາ 19 ໂຄງປະກອບການຈັດຕັ້ງຂອງບໍລິສັດຫຼັກຊັບ**

ໂຄງປະກອບການຈັດຕັ້ງຂອງບໍລິສັດຫຼັກຊັບ ຕ້ອງປະຕິບັດຕາມການກຳນົດໄວ້ໃນ ກົດໝາຍວ່າດ້ວຍ ຫຼັກຊັບ ມາດຕາ 59.

### ມາດຕາ 20 ກອງປະຊຸມຜູ້ຖືຮຸ້ນ

ກອງປະຊຸມຜູ້ຖືຮຸ້ນ ແມ່ນການຈັດຕັ້ງສູງສຸດຂອງບໍລິສັດຫຼັກຊັບ. ກອງປະຊຸມຜູ້ຖືຮຸ້ນ ມີສອງປະເພດ ຄື: ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ.

ການແຈ້ງກ່ຽວກັບກອງປະຊຸມ, ອົງປະຊຸມ, ວາລະກອງປະຊຸມ, ວິທີລົງມະຕິ, ມະຕິກອງປະຊຸມ ການປ່ຽນແປງ ແລະ ການລົບລ້າງມະຕິກອງປະຊຸມ ໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍ ວິສາຫະກິດ. ກອງປະຊຸມສາມັນຂອງຜູ້ຖືຮຸ້ນ ຕ້ອງເປີດຂຶ້ນພາຍໃນ ເດືອນເມສາ ຂອງປີການບັນຊີຖັດໄປ. ກອງປະຊຸມວິສາມັນ ສາມາດເປີດຂຶ້ນເວລາໃດກໍ່ໄດ້ ຖ້າວ່າມີຄວາມຈຳເປັນ.

### ມາດຕາ 21 ສິດ ແລະ ໜ້າທີ່ ຂອງກອງປະຊຸມຜູ້ຖືຮຸ້ນ

ກອງປະຊຸມຜູ້ຖືຮຸ້ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງເອົາ ກົດລະບຽບ ແລະ ສັນຍາສ້າງຕັ້ງ ບໍລິສັດຫຼັກຊັບ ຕາມການສະເໜີ ຂອງສະພາບໍລິຫານ;
2. ເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ, ສະມາຊິກສະພາບໍລິຫານ ກ່ອນສະເໜີຕໍ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພິຈາລະນາ ແລະ ຄັດເລືອກບໍລິສັດກວດສອບ;
3. ຮັບຮອງຄະນະອຳນວຍການຕາມການສະເໜີຂອງສະພາບໍລິຫານ;
4. ຕົກລົງເບ້ຍປະຈຳປີ, ເບ້ຍປະຊຸມ, ເງິນເດືອນ ຫຼື ນະໂຍບາຍຕ່າງໆ ສຳລັບສະມາຊິກສະພາບໍລິຫານ, ຄະນະອຳນວຍການ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ພະນັກງານ;
5. ຮັບຮອງເອົາບົດສະຫຼຸບ, ແຜນການດຳເນີນທຸລະກິດ ແລະ ບົດລາຍງານຜົນການກວດສອບປະຈຳປີ ຕາມການສະເໜີຂອງສະພາບໍລິຫານ;
6. ຮັບຮອງເອົາການເພີ່ມ ຫຼື ຫຼຸດທຶນຈົດທະບຽນ ຕາມການສະເໜີຂອງສະພາບໍລິຫານ;
7. ຮັບຮອງເອົາການຄວບທຸລະກິດ, ການສ້າງຕັ້ງບໍລິສັດໃນກຸ່ມ, ການລົງທຶນ, ການຂາຍຊັບສິນ ຫຼື ການຍຸບເລີກບໍລິສັດຫຼັກຊັບ ຕາມການສະເໜີ ຂອງສະພາບໍລິຫານ;
8. ຮັບຮອງເອົາການສະເໜີແບ່ງປັນ ລາຍຮັບ, ເງິນປັນຜົນ ແລະ ການສ້າງຄັງຕ່າງໆ ຕາມການສະເໜີ ຂອງສະພາບໍລິຫານ;
9. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 22 ສະພາບໍລິຫານ

ສະພາບໍລິຫານຂອງບໍລິສັດຫຼັກຊັບ ປະກອບດ້ວຍສະມາຊິກແຕ່ສາມຄົນ (3 ຄົນ) ຂຶ້ນໄປ, ໃນນັ້ນ ຕ້ອງມີສະມາຊິກອິດສະຫຼະຢ່າງໜ້ອຍໜຶ່ງຄົນ (1 ຄົນ) ທີ່ບໍ່ມີສ່ວນພົວພັນກັບຜົນປະໂຫຍດຂອງບໍລິສັດ, ບໍ່ແມ່ນພະນັກງານ ຫຼື ເປັນຜູ້ດຳລົງຕຳແໜ່ງໃດໜຶ່ງພາຍໃນບໍລິສັດຫຼັກຊັບ ຊຶ່ງສາມາດປະກອບຄຳເຫັນຢ່າງເປັນເອກະລາດ.

ສະພາບໍລິຫານ ປະກອບດ້ວຍ ປະທານ, ຮອງປະທານ ແລະ ສະມາຊິກ ຊຶ່ງຖືກເລືອກຕັ້ງ ແລະ ປົດຕຳແໜ່ງໂດຍກອງປະຊຸມຜູ້ຖືຮຸ້ນ. ອາຍຸການຂອງສະມາຊິກສະພາບໍລິຫານ ແມ່ນບໍ່ເກີນສອງປີ (2 ປີ) ແລະ ສາມາດຖືກເລືອກຕັ້ງຄືນໃໝ່ໄດ້.

ສະພາບໍລິຫານ ຕ້ອງເປີດກອງປະຊຸມຢ່າງໜ້ອຍສອງຄັ້ງຕໍ່ປີ (2 ຄັ້ງ/ປີ).

### ມາດຕາ 23 ເງື່ອນໄຂຂອງສະມາຊິກສະພາບໍລິຫານ

ສະມາຊິກສະພາບໍລິຫານ ຂອງບໍລິສັດຫຼັກຊັບ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ຄຸນວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປ ແລະ ປະສົບການທາງດ້ານ ການເງິນ-ການທະນາຄານ, ທຸລະກິດຫຼັກຊັບ ຫຼື ການບໍລິຫານທຸລະກິດສາມປີ (3 ປີ) ຂຶ້ນໄປ;
2. ບໍ່ເຄີຍຖືກປົດຕໍາແໜ່ງຈາກການເປັນຜູ້ບໍລິຫານໃນນິຕິບຸກຄົນອື່ນ, ບໍ່ເຄີຍຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍມາກ່ອນ ແລະ ບໍ່ເປັນຜູ້ບໍລິຫານໃນນິຕິບຸກຄົນ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ;
3. ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ເປັນຕົ້ນ ໃນສະຖານ ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ ແລະ ບໍ່ເຄີຍກະທໍາຜິດກ່ຽວກັບທຸລະກິດດ້ານຫຼັກຊັບ.

### ມາດຕາ 24 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ

ສະພາບໍລິຫານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງເອົາລະບຽບການເຄື່ອນໄຫວ ຂອງບໍລິສັດຫຼັກຊັບ ຕາມການສະເໜີຂອງຄະນະອໍານວຍການ ກ່ອນສະເໜີຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພິຈາລະນາ;
2. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຄະນະອໍານວຍການ ຕາມການຕົກລົງເຫັນດີຂອງກອງປະຊຸມຜູ້ຖືຮຸ້ນ ແລະ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
3. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຄະນະກໍາມະການກວດກາພາຍໃນ, ຄະນະກໍາມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ ແລະ ຄະນະກໍາມະການອື່ນ ຂອງສະພາບໍລິຫານ ຕາມການຕົກລົງເຫັນດີ ຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
4. ກໍານົດນະໂຍບາຍ, ທິດທາງແຜນການ, ກົນໄກ ແລະ ລະບຽບຫຼັກການ ເພື່ອຊີ້ນໍາໃຫ້ຄະນະອໍານວຍການ ຈັດຕັ້ງປະຕິບັດ;
5. ຕິດຕາມການຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມຜູ້ຖືຮຸ້ນ ແລະ ມະຕິກອງປະຊຸມສະພາບໍລິຫານ ຂອງຄະນະອໍານວຍການ;
6. ເປັນໃຈກາງປະສານງານ ແລະ ດັດປັບການປະຕິບັດວຽກງານຂອງຄະນະອໍານວຍການ;
7. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ແລະ ເອກະສານ ພ້ອມທັງຊີ້ແຈງບັນຫາຕໍ່ ບໍລິສັດກວດສອບ, ຄະນະກວດກາ, ເຈົ້າໜ້າທີ່ສືບສວນ-ສອບສວນຫຼັກຊັບ ແລະ ບຸກຄົນທີ່ກ່ຽວຂ້ອງ;
8. ລາຍງານການເຄື່ອນໄຫວ ແລະ ສ້າງແຜນການດໍາເນີນທຸລະກິດປະຈໍາປີ ຂອງບໍລິສັດຫຼັກຊັບ ຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາ;
9. ສະເໜີ ການຄວບທຸລະກິດ, ການສ້າງຕັ້ງບໍລິສັດໃນກຸ່ມ, ການລົງທຶນ, ການຂາຍຊັບສິນ ຫຼື ການຍຸບເລີກບໍລິສັດຫຼັກຊັບ ຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ;
10. ຊີ້ນໍາການປະຕິບັດວຽກງານ ຂອງຄະນະກໍາມະການກວດກາພາຍໃນ, ຄະນະກໍາມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ ແລະ ຄະນະກໍາມະການອື່ນ ຂອງສະພາບໍລິຫານ;

11. ສະເໜີການສ້າງ ແລະ ປັບປຸງ ກົດລະບຽບ ແລະ ສັນຍາສ້າງຕັ້ງຂອງບໍລິສັດຫຼັກຊັບ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ;
12. ຄົ້ນຄວ້າກຳນົດເບ້ຍປະຊຸມຂອງກອງປະຊຸມສະພາບໍລິຫານ, ເງິນເດືອນ, ເງິນບຳເນັດ ແລະ ນະໂຍບາຍຕ່າງໆ ສຳລັບ ສະມາຊິກສະພາບໍລິຫານ, ຄະນະອຳນວຍການ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ພະນັກງານ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ;
13. ຄົ້ນຄວ້າການແບ່ງປັນ ລາຍຮັບ, ເງິນປັນຜົນ ແລະ ການສ້າງຄັງຕ່າງໆ ເພື່ອສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ;
14. ຊີ້ແຈງ, ຕອບຄຳຖາມ ແລະ ໃຫ້ລາຍລະອຽດກ່ຽວກັບການເຄື່ອນໄຫວຂອງບໍລິສັດຫຼັກຊັບ ຕໍ່ກອງປະຊຸມຜູ້ຖືຮຸ້ນ;
15. ຮັບຜິດຊອບທຸກການເຄື່ອນໄຫວຂອງບໍລິສັດຫຼັກຊັບ ລວມທັງຜົນເສັຍຫາຍຂອງບໍລິສັດຫຼັກຊັບ ແລະ ຂອງລູກຄ້າ ທີ່ເກີດຈາກຄວາມຜິດພາດຂອງຕົນ;
16. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 25 ຄະນະກຳມະການສະເພາະດ້ານຂອງສະພາບໍລິຫານ

ຄະນະກຳມະການສະເພາະດ້ານຂອງສະພາບໍລິຫານ ປະກອບດ້ວຍ: ຄະນະກຳມະການກວດກາພາຍໃນ (Internal Audit Committee), ຄະນະກຳມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ (Compliance Unit Committee) ແລະ ຄະນະກຳມະການອື່ນ ທີ່ເຫັນວ່າມີຄວາມຈຳເປັນ. ແຕ່ລະຄະນະກຳມະການ ຕ້ອງມີສະມາຊິກຢ່າງໜ້ອຍ ສອງ ຄົນ (2 ຄົນ) ຂຶ້ນໄປ ແລະ ໜຶ່ງໃນນັ້ນ ຕ້ອງແມ່ນສະມາຊິກສະພາບໍລິຫານ ແຕ່ບໍ່ແມ່ນຜູ້ດຳລົງຕຳແໜ່ງເປັນຄະນະອຳນວຍການ.

### ມາດຕາ 26 ເງື່ອນໄຂຂອງຄະນະກຳມະການກວດກາພາຍໃນ

ຄະນະກຳມະການກວດກາພາຍໃນ ຕ້ອງມີເງື່ອນໄຂພື້ນຕໍ່ ດັ່ງນີ້:

1. ຄຸນວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປທາງດ້ານ ບັນຊີ, ກວດສອບ, ກົດໝາຍ, ການເງິນ-ການທະນາຄານ ຫຼື ບໍລິຫານທຸລະກິດ;
2. ປະສົບການທາງດ້ານ ບັນຊີ, ກວດສອບ, ການເງິນ-ການທະນາຄານ ຫຼື ທຸລະກິດຫຼັກຊັບ ສາມປີ (3 ປີ) ຂຶ້ນໄປ;
3. ບໍ່ເຄີຍຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍມາກ່ອນ ແລະ ບໍ່ເປັນຜູ້ບໍລິຫານໃນນິຕິບຸກຄົນ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ;
4. ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ເປັນຕົ້ນ ໃນສະຖານ ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ ແລະ ບໍ່ເຄີຍກະທຳຜິດກ່ຽວກັບທຸລະກິດດ້ານຫຼັກຊັບ;
5. ຮັບຮູ້ ແລະ ເຊື່ອມຊຶມ ບັນດາແຜນທຸລະກິດຂອງບໍລິສັດ ເປັນຕົ້ນ ແຜນປະຈຳອາທິດ, ປະຈຳເດືອນ, ແລະ ປະຈຳປີ ແລະ ແຜນຍຸດທະສາດ ຂອງບໍລິສັດ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງຄະນະກຳມະການກວດກາພາຍໃນ**

ຄະນະກຳມະການກວດກາພາຍໃນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນການກວດກາໃຫ້ສອດຄ່ອງກັບຂອບເຂດສິດ ແລະ ໜ້າທີ່ຂອງຕົນ ທີ່ໄດ້ຮັບມອບໝາຍຈາກສະພາບໍລິຫານ ຊຶ່ງແຜນດັ່ງກ່າວ ຕ້ອງກວມເອົາທຸລະກຳທີ່ສຳຄັນຂອງບໍລິສັດ ແລະ ຕ້ອງໄດ້ຮັບການຮັບຮອງຈາກສະພາບໍລິຫານ;
2. ເຂົ້າຮ່ວມໃນການສ້າງແຜນການເຄື່ອນໄຫວຂອງບໍລິສັດ ເພື່ອຄວາມສະດວກໃນການຕິດຕາມກວດກາ;
3. ຕິດຕາມ ການປະຕິບັດວຽກງານ ຂອງຄະນະອຳນວຍການ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ພະນັກງານ ໃຫ້ສອດຄ່ອງກັບແຜນການເຄື່ອນໄຫວທີ່ກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານໄດ້ຮັບຮອງເອົາ ພ້ອມທັງລາຍງານໃຫ້ສະພາບໍລິຫານຊາບ ຢ່າງເປັນປົກກະຕິ;
4. ເຮັດບົດລາຍງານຜົນການກວດກາປະຈຳປີສົ່ງໃຫ້ ສະພາບໍລິຫານຮັບຮອງ;
5. ປະສານກັບຄະນະກວດສອບພາຍນອກ ໃນການປະຕິບັດໜ້າທີ່ໃນການກວດສອບ;
6. ຕີລາຄາຄຸນນະພາບຂອງບໍລິສັດກວດສອບ, ຄວາມເປັນເອກະລາດ ແລະ ການພົວພັນຂອງຜູ້ກວດສອບ ໂດຍເບິ່ງສາຍພົວພັນຮອບດ້ານ ລະຫວ່າງຜູ້ກວດສອບ ກັບບໍລິສັດຫຼັກຊັບ;
7. ຕິດຕໍ່ ຫຼື ປະສານງານກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງສະພາບໍລິຫານ.

**ມາດຕາ 28 ເງື່ອນໄຂຂອງຄະນະກຳມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ**

ຄະນະກຳມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ ນອກຈາກມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 26 ຍົກເວັ້ນ ຂໍ້ 5 ຂອງລະບຽບສະບັບນີ້ແລ້ວ ຕ້ອງມີເງື່ອນໄຂເພີ່ມເຕີມ ຄື: ເປັນຜູ້ທີ່ຮັບຮູ້ ແລະ ເຂົ້າໃຈບັນດາກົດໝາຍ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານຫຼັກຊັບ ແລະ ລະບຽບການທັງໝົດ ຂອງບໍລິສັດຕົນ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງຄະນະກຳມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ**

ຄະນະກຳມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນການກວດກາໃຫ້ສອດຄ່ອງກັບ ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ທີ່ໄດ້ຮັບມອບໝາຍຈາກສະພາບໍລິຫານ ຊຶ່ງແຜນດັ່ງກ່າວ ຕ້ອງໄດ້ຮັບການຮັບຮອງຈາກສະພາບໍລິຫານ;
2. ຕິດຕາມ ແລະ ກວດກາ ການປະຕິບັດວຽກງານຂອງ ຄະນະອຳນວຍການ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ພະນັກງານ ເພື່ອລາຍງານຕໍ່ສະພາບໍລິຫານ ຢ່າງເປັນປົກກະຕິ ພ້ອມທັງສະເໜີວິທີການແກ້ໄຂ ເມື່ອພົບເຫັນການປະຕິບັດວຽກງານ ບໍ່ສອດຄ່ອງກັບລະບຽບກົດໝາຍທີ່ຕິດພັນກັບວຽກງານຫຼັກຊັບ, ກົດລະບຽບພາຍໃນ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
3. ກໍລະນີພົບເຫັນເຫດການທີ່ອາດກໍ່ໃຫ້ເກີດຜົນກະທົບຕໍ່ບໍລິສັດ ແລະ ຕະຫຼາດທຶນໂດຍລວມ ຕ້ອງລາຍງານທັນທີຕໍ່ ສະພາບໍລິຫານ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

4. ເຜີຍແຜ່ຂໍ້ມູນ ແລະ ໃຫ້ຄຳປຶກສາແກ່ພາກສ່ວນຕ່າງໆໃນບໍລິສັດ ກ່ຽວກັບການປະຕິບັດວຽກງານ ເພື່ອໃຫ້ສອດຄ່ອງກັບລະບຽບກົດໝາຍທີ່ຕິດພັນກັບວຽກງານຫຼັກຊັບ, ກົດລະບຽບພາຍໃນ ແລະ ລະບຽບການອື່ນຂອງບໍລິສັດ;
5. ສັງລວມຂໍ້ມູນກ່ຽວກັບການຮ້ອງຟ້ອງ-ຮ້ອງທຸກຂອງລູກຄ້າ ເພື່ອສະເໜີຕໍ່ສະພາບໍລິຫານແກ້ໄຂ;
6. ຕິດຕາມກວດກາຄວາມຄືບໜ້າຂອງຄະນະອຳນວຍການ ກ່ຽວກັບການແກ້ໄຂຂໍ້ຄົງຄ້າງ ທີ່ກຳນົດໃນບົດລາຍງານການກວດສອບ ແລະ ແຈ້ງການຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
7. ຕິດຕໍ່ ຫຼື ປະສານງານກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງສະພາບໍລິຫານ.

### ມາດຕາ 30 ຄະນະອຳນວຍການ

ຄະນະອຳນວຍການ ແມ່ນຜູ້ບໍລິຫານຈັດການວຽກງານປະຈຳວັນຂອງບໍລິສັດຫຼັກຊັບໃນຂອບເຂດສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 32 ຂອງລະບຽບສະບັບນີ້ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ.

ຄະນະອຳນວຍການ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງໂດຍສະພາບໍລິຫານ, ມີອາຍຸການສອງປີ (2 ປີ) ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

ຜູ້ອຳນວຍການ ຕ້ອງເປັນສະມາຊິກສະພາບໍລິຫານ ແຕ່ບໍ່ໃຫ້ດຳລົງຕຳແໜ່ງເປັນ ປະທານ ຫຼື ຮອງປະທານ ສະພາບໍລິຫານໃນເວລາດຽວກັນ.

### ມາດຕາ 31 ເງື່ອນໄຂຂອງຄະນະອຳນວຍການ

ຄະນະອຳນວຍການ ຂອງບໍລິສັດຫຼັກຊັບ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 23 ຂອງລະບຽບສະບັບນີ້. ນອກຈາກນັ້ນ, ຕ້ອງມີໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### ມາດຕາ 32 ສິດ ແລະ ໜ້າທີ່ ຂອງຜູ້ອຳນວຍການ

ຜູ້ອຳນວຍການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ລະບຽບການເຄື່ອນໄຫວ ຂອງບໍລິສັດຫຼັກຊັບ ເພື່ອສະເໜີຕໍ່ກອງປະຊຸມສະພາບໍລິຫານ ພິຈາລະນາ;
2. ຄົ້ນຄວ້າກຳນົດທິດທາງແຜນການໃນການບໍລິຫານຈັດການບໍລິສັດຫຼັກຊັບ ເພື່ອສະເໜີຕໍ່ກອງປະຊຸມສະພາບໍລິຫານ ພິຈາລະນາສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ;
3. ຈັດຕັ້ງປະຕິບັດລະບຽບວ່າດ້ວຍຄວາມໝັ້ນຄົງ ຂອງບໍລິສັດຫຼັກຊັບ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ;
4. ສະຫຼຸບລາຍງານການເຄື່ອນໄຫວ ແລະ ສ້າງແຜນການດຳເນີນທຸລະກິດປະຈຳປີ ຂອງບໍລິສັດຫຼັກຊັບ ເພື່ອສະເໜີຕໍ່ກອງປະຊຸມສະພາບໍລິຫານ ພິຈາລະນາສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ;
5. ຈັດຕັ້ງຜັນຂະຫຍາຍ ມະຕິກອງປະຊຸມຜູ້ຖືຮຸ້ນ ແລະ ກອງປະຊຸມສະພາບໍລິຫານ;

6. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ກົດລະບຽບ ແລະ ສັນຍາຮ່ວມທຶນ ຂອງບໍລິສັດຫຼັກຊັບ ເພື່ອສະເໜີຕໍ່ກອງປະຊຸມສະພາບໍລິຫານ ພິຈາລະນາສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ;
7. ລາຍງານສະພາບການເຄື່ອນໄຫວຂອງບໍລິສັດຫຼັກຊັບ ທີ່ບໍ່ສອດຄ່ອງກັບລະບຽບກົດໝາຍທີ່ຕິດພັນກັບວຽກງານຫຼັກຊັບຕໍ່ ສະພາບໍລິຫານ ແລະ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບທັນທີ;
8. ຄົ້ນຄວ້າກໍານົດເບ້ຍປະຊຸມຂອງກອງປະຊຸມສະພາບໍລິຫານ, ເງິນເດືອນ, ເງິນບໍາເນັດ ແລະ ນະໂຍບາຍຕ່າງໆ ສໍາລັບ ສະມາຊິກສະພາບໍລິຫານ, ຄະນະອໍານວຍການ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ພະນັກງານ ເພື່ອສະເໜີຕໍ່ກອງປະຊຸມສະພາບໍລິຫານ ພິຈາລະນາສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ;
9. ຄົ້ນຄວ້າການແບ່ງປັນ ລາຍຮັບ, ເງິນປັນຜົນ ແລະ ການສ້າງຄັງຕ່າງໆ ເພື່ອສະເໜີຕໍ່ກອງປະຊຸມສະພາບໍລິຫານ ພິຈາລະນາສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ;
10. ຊີ້ແຈງ, ຕອບຄໍາຖາມ ແລະ ໃຫ້ລາຍລະອຽດກ່ຽວກັບການເຄື່ອນໄຫວຂອງບໍລິສັດຫຼັກຊັບ ຕໍ່ກອງປະຊຸມສະພາບໍລິຫານ;
11. ຮັບຜິດຊອບທຸກການເຄື່ອນໄຫວຂອງບໍລິສັດຫຼັກຊັບ ລວມທັງຜົນເສຍຫາຍຂອງບໍລິສັດຫຼັກຊັບ ແລະ ຂອງລູກຄ້າ ທີ່ເກີດຈາກຄວາມຜິດພາດຂອງຕົນ;
12. ເປັນຕົວແທນໃນການລົງລາຍເຊັນໃນສັນຍາ ແລະ ເອກະສານທາງການຂອງບໍລິສັດຫຼັກຊັບ;
13. ບໍລິຫານວຽກງານປະຈໍາວັນຂອງບໍລິສັດຫຼັກຊັບໃນຂອບເຂດ ສິດ ແລະ ໜ້າທີ່ ຂອງຕົນຕາມທີ່ໄດ້ກໍານົດໄວ້ໃນກົດລະບຽບ ຫຼື ຕາມການມອບໝາຍຂອງສະພາບໍລິຫານ;
14. ສະເໜີແຕ່ງຕັ້ງ ຫຼື ປົດຕໍາແໜ່ງຮອງຜູ້ອໍານວຍການ ຕໍ່ສະພາບໍລິຫານພິຈາລະນາ;
15. ແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ຄະນະພະແນກ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ບັນຈຸສັບຊ້ອນພະນັກງານຂອງບໍລິສັດຫຼັກຊັບ;
16. ຄົ້ນຄວ້າການຄວບທຸລະກິດ, ການສ້າງຕັ້ງບໍລິສັດໃນກຸ່ມ, ການລົງທຶນ, ການຂາຍຊັບສິນ ຫຼື ການຍຸບເລີກບໍລິສັດຫຼັກຊັບ ຕໍ່ກອງປະຊຸມສະພາບໍລິຫານພິຈາລະນາ;
17. ຕົກລົງກ່ຽວກັບການປະຕິບັດນະໂຍບາຍຍ້ອງຍໍ ຫຼື ລົງວິໄນຕໍ່ພະນັກງານ ຕາມລະບຽບກົດໝາຍ;
18. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ແລະ ເອກະສານ ພ້ອມທັງຊີ້ແຈງບັນຫາ ຕໍ່ຄະນະກໍາມະການກວດກາພາຍໃນ, ຄະນະກໍາມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ, ບໍລິສັດກວດສອບ, ຄະນະກວດກາ, ເຈົ້າໜ້າທີ່ສືບສວນ-ສອບສວນຫຼັກຊັບ ແລະ ບຸກຄົນທີ່ກ່ຽວຂ້ອງ;
19. ລາຍງານການເຄື່ອນໄຫວຂອງບໍລິສັດຫຼັກຊັບຕໍ່ ສະພາບໍລິຫານ, ຄະນະກໍາມະການກວດກາພາຍໃນ ແລະ ຄະນະກໍາມະການຕິດຕາມການຈັດຕັ້ງປະຕິບັດລະບຽບກົດໝາຍ;
20. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໃນກົດລະບຽບຂອງບໍລິສັດຫຼັກຊັບ.

## ໝວດທີ 4
## ການເຄື່ອນໄຫວທຸລະກິດຫຼັກຊັບ

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ ມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍ ຫຼັກຊັບ ມາດຕາ 68. ນອກນັ້ນ, ບໍລິສັດຫຼັກຊັບ ມີໜ້າທີ່ເພີ່ມເຕີມ ດັ່ງນີ້:

1. ສັບຊ້ອນພະນັກງານ ພາຍໃນ ແລະ ຕ່າງປະເທດ ໃນຈຳນວນ ແລະ ໜ້າວຽກທີ່ເໝາະສົມ ກໍລະນີ ເປັນບໍລິສັດຮ່ວມທຶນ;
2. ປະຕິບັດ ສິດ ແລະ ໜ້າທີ່ເພີ່ມເຕີມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 34 ການເຄື່ອນໄຫວທຸລະກິດຂອງບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ ສາມາດເຄື່ອນໄຫວທຸລະກິດປະເພດໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍ ຫຼັກຊັບ ມາດຕາ 61, 62, 63 ແລະ 64 . ນອກນັ້ນ, ການເຄື່ອນໄຫວທຸລະກິດຫຼັກຊັບຮ່ວມກັບນິຕິບຸກຄົນອື່ນທີ່ກ່ຽວຂ້ອງທັງ ພາຍໃນ ແລະ ຕ່າງປະເທດ ຕ້ອງເຮັດສັນຍາຮ່ວມກັນຢ່າງເປັນລາຍລັກອັກສອນ ແລະ ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 35 ຂອບເຂດການເຄື່ອນໄຫວທຸລະກິດຂອງ ສາຂາ ແລະ ໜ່ວຍບໍລິການ**

ສາຂາ ສາມາດເຄື່ອນໄຫວທຸລະກິດຫຼັກຊັບ ປະເພດນາຍຊື້-ຂາຍຫຼັກຊັບ ແລະ ທີ່ປຶກສາດ້ານການເງິນ. ສ່ວນໜ່ວຍບໍລິການ ສາມາດເຄື່ອນໄຫວທຸລະກິດຫຼັກຊັບ ປະເພດນາຍຊື້-ຂາຍຫຼັກຊັບ ເທົ່ານັ້ນ.

**ມາດຕາ 36 ຂໍ້ຫ້າມ**

ຫ້າມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ບໍລິສັດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ມີພຶດຕິກຳ ບໍ່ວ່າທາງກົງ ຫຼື ທາງອ້ອມ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍ ຫຼັກຊັບ ມາດຕາ 135 ແລະ 137. ນອກນັ້ນ ຫ້າມບໍລິສັດຫຼັກຊັບ ລວມທັງສະມາຊິກສະພາບໍລິຫານ, ຄະນະອຳນວຍການ, ຄະນະສາຂາ, ຄະນະພະແນກ, ຄະນະໜ່ວຍບໍລິການ, ນັກວິຊາຊີບທຸລະກິດຫຼັກຊັບ, ພະນັກງານ ແລະ ຫ້ອງການຜູ້ຕາງໜ້າ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ອະນຸຍາດໃຫ້ ບຸກຄົນ ຫຼື ນິຕິບຸກຄົນອື່ນ ນຳໃຊ້ໃບອະນຸຍາດຂອງຕົນ;
2. ສ້າງຕັ້ງບໍລິສັດຫຼັກຊັບໃນກຸ່ມ;
3. ໃຫ້ບໍລິການທຸລະກິດຫຼັກຊັບ ຮ່ວມກັບບຸກຄົນ ແລະ ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ຮັບດອກເບ້ຍ ທີ່ໄດ້ຈາກບັນຊີເງິນຝາກຂອງບໍລິສັດຫຼັກຊັບເພື່ອລູກຄ້າ;

5. ບໍລິການປ່ອຍກູ້ ເງິນ ຫຼື ຫຼັກຊັບ ໃຫ້ແກ່ລູກຄ້າ;
6. ຮັບຄໍາສັ່ງຊື້-ຂາຍຫຼັກຊັບຂອງລູກຄ້າ ຢູ່ນອກສະຖານທີ່ ທີ່ໄດ້ກໍານົດໄວ້;
7. ໃຫ້ບໍລິການເປີດບັນຊີໃນນາມ ແກ່ລູກຄ້າ;
8. ຫ້ອງການຜູ້ຕາງໜ້າ ເຄື່ອນໄຫວທຸລະກິດຫຼັກຊັບ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍ ຫຼັກຊັບ ມາດຕາ 61 ລວມທັງການໃຫ້ບໍລິການເປັນຕົວແທນເຄື່ອນໄຫວທຸລະກິດຫຼັກຊັບ ແກ່ບໍລິສັດຫຼັກຊັບໃດໜຶ່ງ ທີ່ຖືກສ້າງຕັ້ງຂຶ້ນໃນ ສປປ ລາວ.

## ໝວດທີ 5
## ການບັນຊີ, ການລາຍງານ, ການເປີດເຜີຍຂໍ້ມູນ, ການເກັບຮັກສາຂໍ້ມູນ ແລະ ການກວດກາ

### ມາດຕາ 37 ການບັນຊີ

ບໍລິສັດຫຼັກຊັບ ຕ້ອງປະຕິບັດລະບອບການບັນຊີ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍ ຫຼັກຊັບ ມາດຕາ 70.

### ມາດຕາ 38 ການລາຍງານ, ການເປີດເຜີຍຂໍ້ມູນ ແລະ ການເກັບຮັກສາຂໍ້ມູນ

ບໍລິສັດຫຼັກຊັບ, ສະມາຊິກສະພາບໍລິຫານ, ຄະນະອໍານວຍການ, ຄະນະສາຂາ, ຄະນະພະແນກ, ຄະນະໜ່ວຍບໍລິການ, ນັກວິຊາຊີບທຸລະກິດຫຼັກຊັບ, ພະນັກງານ ແລະ ຫ້ອງການຜູ້ຕາງໜ້າ ຕ້ອງປະຕິບັດລະບອບການລາຍງານ, ລະບອບການເປີດເຜີຍຂໍ້ມູນ ແລະ ການເກັບຮັກສາຂໍ້ມູນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍ ຫຼັກຊັບ ພາກທີ VI ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຂອງ ສປປ ລາວ.

### ມາດຕາ 39 ການກວດກາ

ການກວດກາບໍລິສັດຫຼັກຊັບ ຕ້ອງປະຕິບັດຕາມ ກົດໝາຍວ່າດ້ວຍຫຼັກຊັບ ພາກທີ X, ໝວດທີ 2 ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຂອງ ສປປ ລາວ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 40 ການຈັດຕັ້ງປະຕິບັດ

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດລະບຽບສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 41 ຜົນສັກສິດ**

ລະບຽບສະບັບນີ້ມີຜົນສັກສິດນັບແຕ່ວັນ ປະທານ ຄະນະກໍາມະການຄຸ້ມຄອງຫຼັກຊັບ ລົງລາຍເຊັນ ເປັນຕົ້ນໄປ.

**ປະທານ ຄະນະກໍາມະການຄຸ້ມຄອງຫຼັກຊັບ**

ສົມສະຫວາດ ເລັ່ງສະຫວັດ